ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຈັດຕັ້ງແລະພະນັກງານ

ເລກທີ 485/ກຈພ

ນະຄອນຫຼວງວຽງຈັນ, ວັນທີ 9 ຕຸລາ 2024

# ສະໂໜດນຳສົ່ງ

**ຮຽນ: ສະຫາຍ ທ..ແສງສີ..ແສງເມືອງ.......... ກຳມະການຄະນະບໍລິຫານງານພັກ ທຫລ ທີ່ນັບຖື.**
**ເລື່ອງ: ນຳສົ່ງເອກະສານ.**

ເອກະສານທີ່ສົ່ງມາ ປະກອບມີ:

| ລ/ດ | ເນື້ອໃນຫຍໍ້ເອກະສານ | ຈຳນວນ | ຈຸດປະສົງ | ໝາຍເຫດ |
|---|---|---|---|---|
| 1 | ມະຕິຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບວຽກງານພາຍໃນຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ສະໄໝທີ IV ສະບັບເລກທີ 277/ຄພ.ທຫລ ລົງວັນທີ 9 ຕຸລາ 2024 | 01 ສະບັບ | ເພື່ອຊີ້ນຳຮາກຖານພັກກ່ຽວຂ້ອງ ຕາມການຕົກລົງດັ່ງກ່າວ. | |

ຫົວໜ້າກົມ

ໂພທິຈັນ ທຳມະເທວາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ

ເລກທີ 277 /ຄພ.ທຫລ

ນະຄອນຫຼວງວຽງຈັນ, ວັນທີ 09 ຕຸລາ 2024

# ມະຕິຕົກລົງ
# ວ່າດ້ວຍການແບ່ງຄວາມຮັບຜິດຊອບວຽກງານ
# ພາຍໃນຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ສະໄໝທີ IV

- ອີງຕາມກົດລະບຽບຂອງພັກປະຊາຊົນປະຕິວັດລາວ ສະໄໝທີ XI;
- ອີງຕາມຂໍ້ຕົກລົງວ່າດ້ວຍໜ້າທີ່, ຂອບເຂດສິດ ແລະ ແບບແຜນວິທີເຮັດວຽກຂອງຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ສະໄໝທີ IV ສະບັບເລກທີ 283/ຄພ.ທຫລ, ລົງວັນທີ 03 ພະຈິກ 2020;
- ອີງຕາມການເຫັນດີເປັນເອກະພາບພາຍໃນຄະນະປະຈຳພັກ-ຄະນະຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 03 ຕຸລາ 2024.

## ຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ຕົກລົງ:

ມາດຕາ 1 ແບ່ງຄວາມຮັບຜິດຊອບວຽກງານພາຍໃນຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ສະໄໝທີ IV, ລາຍລະອຽດ ດັ່ງນີ້:

**1. ສະຫາຍ ນ. ວັດທະນາ ດາລາລອຍ** ຮັກສາການເລຂາຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ:

- ຮັບຜິດຊອບຊີ້ນຳ-ນຳພາວຽກງານຮອບດ້ານພາຍໃນອົງຄະນະພັກທະນາຄານແຫ່ງ ສປປ ລາວ; ຮັບຜິດຊອບໂດຍກົງຕໍ່ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ຕໍ່ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຊີ້ນຳ-ນຳພາຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຂະແໜງທະນາຄານ;

- ຊີ້ນຳວຽກການເມືອງ-ແນວຄິດ, ວຽກຈັດຕັ້ງ, ວຽກພັກ-ພະນັກງານ ຢູ່ອົງຄະນະພັກທະນາຄານແຫ່ງ ສປປ ລາວ;

- ຊີ້ນຳການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ IV, ມະຕິຄຳສັ່ງຂອງຂັ້ນເທິງມາເປັນແຜນງານ-ໂຄງການ ໃນແຕ່ລະໄລຍະຊີ້ນຳການປະຕິບັດບັນດາລະບຽບການທີ່ອົງຄະນະພັກ ທຫລ ແລະ ຂັ້ນເທິງວາງອອກ;

- ຊີ້ນຳການເຄື່ອນໄຫວຂອງໜ່ວຍພັກກົມຈັດຕັ້ງແລະພະນັກງານ, ຄະນະພັກຮາກຖານທະນາຄານການຄ້າຕ່າງປະເທດລາວ ແລະ ໜ່ວຍພັກທະນາຄານຮ່ວມທຸລະກິດລາວ-ຫວຽດ.

2. ສະຫາຍ ນ. ຂັນແກ້ວ ຫຼ້າມະນີເງີາ ກໍາມະການປະຈໍາພັກ, ປະທານຄະນະກວດກາພັກທະນາຄານແຫ່ງ ສປປ ລາວ:

- ຊີ້ນໍາວຽກກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;

- ຮັບຜິດຊອບວຽກງານກວດກາ-ປ້ອງກັນພັກ ແລະ ການປະຕິບັດກົດລະບຽບພັກ; ຕິດຕາມ, ກວດກາການຈັດຕັ້ງປະຕິບັດມະຕິ, ຄໍາສັ່ງຂອງຂັ້ນເທິງທີ່ຕິດພັນກັບໜ້າທີ່ການເມືອງຂອງຂະແໜງທະນາຄານ, ການປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກທະນາຄານແຫ່ງ ສປປ ລາວ ຄັ້ງທີ IV;

- ຊີ້ນໍາການເຄື່ອນໄຫວຂອງໜ່ວຍພັກກົມຄຸ້ມຄອງທະນາຄານທຸລະກິດ, ໜ່ວຍພັກສໍານັກງານປົກປ້ອງເງິນຝາກ, ໜ່ວຍພັກບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ ຄະນະພັກຮາກຖານທະນາຄານນະໂຍບາຍ.

3. ສະຫາຍ ສຸລິວັດ ສຸວັນນະຈຸມຄໍາ ມະການປະຈໍາພັກທະນາຄານແຫ່ງ ສປປ ລາວ:

- ຮັບຜິດຊອບຕິດຕາມ, ກວດກາການຈັດຕັ້ງປະຕິບັດມະຕິ, ຄໍາສັ່ງຂອງຂັ້ນເທິງທີ່ຕິດພັນກັບໜ້າທີ່ການເມືອງຂອງຂະແໜງທະນາຄານ, ການປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກທະນາຄານແຫ່ງ ສປປ ລາວ ຄັ້ງທີ IV ທີ່ຕິດພັນກັບວຽກວິຊາສະເພາະຂອງບັນດາຮາກຖານພັກ;

- ຮັບຜິດຊອບຊ່ວຍເລຂາຄະນະບໍລິຫານງານພັກ ຊີ້ນໍາ-ນໍາພາວຽກງານອົງການຈັດຕັ້ງແມ່ຍິງ;

- ຊີ້ນໍາການເຄື່ອນໄຫວຂອງໜ່ວຍພັກກົມຄຸ້ມຄອງເງິນຕາຕ່າງປະເທດ, ໜ່ວຍພັກກົມບໍລິການທະນາຄານ ແລະ ໜ່ວຍພັກກົມຮ່ວມມືສາກົນ.

4. ສະຫາຍ ອາລຸນ ບຸນຍິງ ກໍາມະການປະຈໍາພັກ, ຮອງປະທານຄະນະກວດກາພັກທະນາຄານແຫ່ງ ສປປ ລາວ:

- ຮັບຜິດຊອບຊ່ວຍເລຂາຄະນະບໍລິຫານງານພັກ ຊີ້ນໍາ-ນໍາພາວຽກງານອົງການຈັດຕັ້ງກໍາມະບານ;

- ຊ່ວຍປະທານຄະນະກວດກາພັກທະນາຄານແຫ່ງ ສປປ ລາວ ໃນການກວດກາການຈັດຕັ້ງປະຕິບັດມະຕິ, ຄໍາສັ່ງຂອງຂັ້ນເທິງທີ່ຕິດພັນກັບວຽກວິຊາການ ຢູ່ຂະແໜງທະນາຄານ ແລະ ການປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກທະນາຄານແຫ່ງ ສປປ ລາວ ຄັ້ງທີ IV ທີ່ຕິດພັນກັບວຽກວິຊາສະເພາະຂອງບັນດາຮາກຖານພັກ;

- ຊີ້ນໍາການເຄື່ອນໄຫວຂອງໜ່ວຍພັກກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ໜ່ວຍພັກກົມບັນຊີແລະການເງິນ, ໜ່ວຍພັກກົມເຕັກໂນໂລຊີຂໍ້ມູນຂ່າວສານ, ໜ່ວຍພັກໂຮງພິມທະນະບັດທະນາຄານແຫ່ງ ສປປ ລາວ, ໜ່ວຍພັກສໍານັກງານຂໍ້ມູນຕ້ານການຟອກເງິນ, ໜ່ວຍພັກບໍລິສັດລັດ ບໍລິຫານໜີ້ ແລະ ຊັບສິນ ຈໍາກັດ ຜູ້ດຽວ, ຄະນະພັກຮາກຖານທະນາຄານພັດທະນາລາວ, ຄະນະພັກຮາກຖານທະນາຄານສົ່ງເສີມກະສິກໍາ, ໜ່ວຍພັກທະນາຄານຮ່ວມພັດທະນາ ແລະ ໜ່ວຍພັກທະນາຄານເອັສທີ.

5. ສະຫາຍ ສຸລິສັກ ທໍານຸວົງ ກໍາມະການພັກທະນາຄານແຫ່ງ ສປປ ລາວ:

- ຮັບຜິດຊອບຕິດຕາມ, ກວດກາການຈັດຕັ້ງປະຕິບັດມະຕິ, ຄໍາສັ່ງຂອງຂັ້ນເທິງທີ່ຕິດພັນກັບໜ້າທີ່ການເມືອງຂອງຂະແໜງທະນາຄານ, ການປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກທະນາຄານແຫ່ງ ສປປ ລາວ ຄັ້ງທີ IV ທີ່ຕິດພັນກັບວຽກວິຊາສະເພາະຂອງບັນດາຮາກຖານພັກ;

- ຮັບຜິດຊອບຊ່ວຍເລຂາຄະນະບໍລິຫານງານພັກ ຊີ້ນຳ-ນຳພາວຽກງານປ້ອງກັນຄວາມສະຫງົບປອດໄພ ພາຍໃນອົງຄະນະພັກທະນາຄານແຫ່ງ ສປປ ລາວ ແລະ ອົງການຈັດຕັ້ງຊາວໜຸ່ມ;

- ຊີ້ນຳການເຄື່ອນໄຫວຂອງໜ່ວຍພັກກົມນະໂຍບາຍເງິນຕາ, ໜ່ວຍພັກກົມພິມຈຳໜ່າຍ, ໜ່ວຍພັກກົມຄຸ້ມຄອງລະບົບການຊຳລະ ແລະ ຄະນະພັກຮາກຖານສະຖາບັນການທະນາຄານ.

5. **ສະຫາຍ ນ. ສາຍສະໝອນ ຈັນທະຈັກ** ກຳມະການພັກທະນາຄານແຫ່ງ ສປປ ລາວ, ຮັບຜິດຊອບລົງເລິກນຳພາການເຄື່ອນໄຫວຂອງຄະນະພັກຮາກຖານທະນາຄານການຄ້າຕ່າງປະເທດລາວ.

6. **ສະຫາຍ ພານຸສັກ ແກ່ນອິງພະຈັນ** ກຳມະການພັກທະນາຄານແຫ່ງ ສປປ ລາວ, ຮັບຜິດຊອບລົງເລິກນຳພາການເຄື່ອນໄຫວຂອງໜ່ວຍພັກຫ້ອງການ.

7. **ສະຫາຍ ວຽງສະຫວັນ ໄຊຍະວົງ** ກຳມະການພັກ, ຮອງປະທານຄະນະກວດກາພັກທະນາຄານແຫ່ງ ສປປ ລາວ ຊ່ວຍປະທານຄະນະກວດກາພັກທະນາຄານແຫ່ງ ສປປ ລາວ ໃນການກວດກາ-ຕິດຕາມການປະຕິບັດກົດລະບຽບພັກ, ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ຕິດພັນກັບການປະຕິບັດແຜນງານ-ໂຄງການຂອງແຕ່ລະຮາກຖານພັກ; ຮັບຜິດຊອບລົງເລິກນຳພາການເຄື່ອນໄຫວຂອງໜ່ວຍພັກກົມກວດກາ.

8. **ສະຫາຍ ນ. ແພງສີ ແພງເມືອງ** ກຳມະການພັກທະນາຄານແຫ່ງ ສປປ ລາວ, ຮັບຜິດຊອບວຽກງານຄັງເງິນຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ, ລົງເລິກນຳພາການເຄື່ອນໄຫວຂອງໜ່ວຍພັກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໜ່ວຍພັກຕະຫຼາດຫຼັກຊັບລາວ.

**ມາດຕາ 2** ບັນດາສະຫາຍ ຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ສະໄໝທີ IV, ບັນດາຄະນະພັກຮາກຖານ ແລະ ໜ່ວຍພັກຮາກຖານ ພ້ອມດ້ວຍທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 3** ມະຕິຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນມະຕິຕົກລົງສະບັບເລກທີ 222/ຄພ.ທຫລ ລົງວັນທີ 13 ສິງຫາ 2024. ຯ

ຕ.ຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ
ຮັກສາການເລຂາ

ພັກປະຊາຊົນປະຕິວັດລາວ
ຄະນະພັກທະນາຄານ ແຫ່ງ ສປປລາວ

**ວັດທະນາ ດາລາລອຍ**

ບ່ອນນຳສົ່ງ:

1. ຄະນະບໍລິຫານງານພັກ ທຫລ, ຜູ້ລະ 1 ສະບັບ (ເພື່ອຈັດຕັ້ງປະຕິບັດ);
2. ຮາກຖານພັກກ່ຽວຂ້ອງ ພາກສ່ວນລະ 1 ສະບັບ (ເພື່ອຊາບ);
3. ເກັບຮັກສາໄວ້ 2 ສະບັບ.